# ບົດລາຍງານວິທີປະຕິບັດ SIREN

STRATEGIC INFORMATION RESPONSE NETWORK
(ຍຸດທະສາດການຕອບໂຕ້ດ້ວຍເຄືອຂ່າຍ ຂໍ້ມູນຂ່າວສານ)
ໂຄງການເຄືອຂ່າຍຕ້ານການຄ້າມະນຸດ ຂອງອົງການສະຫະປະຊາຊາດ ໄລຍະ III

**ບາງກອກ, ປະເທດ ໄທ**

22 ກັນຍາ 2008 ອະນຸພາກພື້ນລຸ່ມແມ່ນ້ຳຂອງ (GMS) 05

## ເປັນຫຍັງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈຶ່ງປະຕິເສດບໍ່ຮັບການຊ່ວຍເຫຼືອ[1]

| | |
|---|---|
| **ຄຳເວົ້າຕົ້ນຕໍ** | ▪ **ທີ່ຕັ້ງ:** ເອີຣົບ (ອານບານີ, ໂມນດາວີ, ເຊີເບຍ)<br>▪ **ຫົວຂໍ້:** ແມ່ຍິງ ແລະເດັກນ້ອຍທີ່ຖືກຄ້າ; ການປົກປ້ອງຜູ້ຖືກເຄາະຮ້າຍ; ພົນກະທົບ<br>▪ **ປະເພດການວິໃຈ:** ການສຳພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ |
| **ຈຸດປະສົງ** | *ເພື່ອວິໃຈສະພາບ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະທາງເລືອກຂອງເຂົາເຈົ້າ ກ່ຽວກັບການປົກປ້ອງ ແລະການບໍລິການທີ່ຖືກສະເໜີ ແລະບໍ່ຖືກສະເໜີ, ສຳລັບຈຸດປະສົງ ໃນລະບຸການປັບປຸງທີ່ເປັນໄປໄດ້ ການປົກປ້ອງຜູ້ຖືກເຄາະຮ້າຍ.* |
| **ຜູ້ຂຽນ** | **ສະຖາບັນຟາໂຟ/ ອົສໂລ, ປະເທດ ນອກແວ**<br>ນາງ Anette Brunovskis<br>Anette.Brunovskis@fafo.no<br><br>**ສະຖາບັນເນຊຸດ/ວຽນນາ, ປະເທດ ໂອຕຣິດສ໌**<br>ນາງ Rebecca Surtees<br>Rsurtees@nexusinstitute.net |

**ກໍລະນີ**

*"ນາງ A" ຍົກຍ້າຍມາຈາກຊົນນະບົດ ທີ່ຢູ່ຊາຍແດນ ເຂົ້າເມືອງໃນປະເທດເພື່ອນບ້ານ ດ້ວຍຄວາມຫວັງວ່າຈະພົບວຽກທີ່ດີ ແລະມາດຕະຖານການດຳລົງຊີວິດທີ່ດີກວ່າ. ນາງໄດ້ພົບກັບແມ່ຍິງຄົນໜຶ່ງ ທີ່ສະເໜີໃຫ້ການຊ່ວຍເຫຼືອເພື່ອບັນລຸທັງສອງເປົ້າໝາຍ, ໂດຍການສັນຍາວ່າຈະພາ ນາງ A ໄປພັກຢູ່ບ່ອນທີ່ດີ ແລະຊ່ວຍຊອກວຽກໃຫ້. ນາງ A ບໍ່ເຂົ້າໃຈພາສາໃນປະເທດນັ້ນດີປານໃດ, ແຕ່ນາງກໍ່ເຫັນດີ ແລະໄດ້ກາຍເປັນຜູ້ຖືກຂູດຮີດແຮງງານ.*

[1] ບົດລາຍງານການປະຕິບັດ SIREN ນີ້ເປັນບົດສະຫຼຸບ: ໂດຍ ນາງ Brunovskis, A. & R. Surtees (2007) *ເຕີບຈາກຄວາມຫຼັງ? ໃນເວລາທີ່ຜູ້ຖືກເຄາະຮ້າຍການຄ້າມະນຸດປະຕິເສດການຊ່ວຍເຫຼືອ.* Fafo AIS (ອົສໂລ) ແລະສະຖາບັນ NEXUS (ວຽນນາ). ສາມາດດາວໂລດບົດລາຍງານນີ້ໄດ້ ໃນ: http://www.fafo.no/pub/rapp/20040/20040.pdf.

*ໃນທີ່ສຸດຕຳຫຼວດກໍ່ບຸກເຂົ້າໃນສະຖານທີ່ດັ່ງກ່າວ, ເຄື່ອນຍ້າຍແມ່ຍິງອອກມາ, ລວມທັງ ນາງ A ແລະໄດ້ສົ່ງນາງໃຫ້ແກ່ແມ່ຍິງອີກຄົນໜຶ່ງ. ແມ່ຍິງຄົນດັ່ງກ່າວ ບອກ ນາງ A ວ່າ ນາງຈະຊ່ວຍຫາທີ່ຢູ່ ແລະວຽກທີ່ດີໄດ້, ຖ້າ ນາງ A ໄປກັບນາງ. ນາງ A ບໍ່ເຂົ້າໃຈດີວ່ານາງເວົ້າຫຍັງ ຍ້ອນນາງຍັງບໍ່ທັນເຂົ້າໃຈພາສາທ້ອງຖິ່ນໄດ້ດີເທື່ອ. ເຖິງວ່າ ແມ່ຍິງຄົນດັ່ງກ່າວ ຈະເປັນພະນັກງານສັງຄົມສົງເຄາະໃນສູນຟື້ນຟູໃນປະເທດກໍ່ຕາມ, ນາງ A ຢ້ານວ່າ ຍິງຄົນນັ້ນຈະເປັນຜູ້ຄ້າມະນຸດຄືກັນ.*

ພວກເຮົາຈະສາມາດປັບປຸງການປົກປ້ອງ ແລະວິທີທາງຕ່າງໆ ທີ່ສະເໜີໃຫ້ ຜູ້ຖືກເຄາະຮ້າຍແນວໃດ, ເພື່ອບໍ່ໃຫ້ການປົກປ້ອງ ແລະບໍລິການຄ້າຍຄືກັບຂະບວນການຄ້າມະນຸດ? ພວກເຮົາຈະຫຼຸດຜ່ອນ ຄວາມກົດດັນ, ຢ້ານກົວ ແລະລະແວງໄດ້ແນວໃດ? ສຳຄັນທີ່ສຸດ, ເຮົາຈະປັບປຸງສິ່ງທີ່ສະເໜີໃຫ້ເຂົາເຈົ້າ ແລະວິທີການສະເໜີໄດ້ແນວໃດ, ເພື່ອດຶງດູດຜູ້ຖືກເຄາະຮ້າຍ ແລະສາມາດແກ້ໄຂຄວາມຕ້ອງການສະເພາະແຕ່ລະຄົນໄດ້? ໄດ້ມີການສຶກສາທີ່ເອີຣົບ ເພື່ອຊອກຫາຄຳຕອບຕໍ່ຄຳຖາມສຳຄັນນີ້.

## *ເປັນຫັຍງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດບາງຄົນປະຕິເສດການຊ່ວຍເຫຼືອ, ແລະຍ້ອນສະພາບການອັນໃດ? ບາງບົດຮຽນ ແລະວິທີການ ຈາກເອີຣົບ*

ໃນຂະນະທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນບໍ່ເຄີຍຖືກສະເໜີການຊ່ວຍເຫຼືອ, ຫຼາຍຄົນທີ່ຖືກສະເໜີ ໄດ້ປະຕິບັດທີ່ຈະຮັບການບໍລິການທີ່ສະເໜີ. ຍ້ອນຫຍັງ? ປະເດັນໂດຍກົງຂອງການສຶກສາແມ່ນ ຖ້າແມ່ຍິງ ແລະເດັກຍິງ ປະຕິເສດການຊ່ວຍເຫຼືອ ຍ້ອນເຂົາເຈົ້າບໍ່ຕ້ອງການ, ຖ້າເປັນເຊັ່ນນີ້ ກໍ່ບໍ່ມີບັນຫາຫຍັງ ເຮົາບໍ່ຄວນກວນເຂົາ. ແຕ່ຖ້າ ເຂົາເຈົ້າປະຕິເສດການຊ່ວຍເຫຼືອຍ້ອນເຫດຜົນອື່ນ ທີ່ຈະໃຫ້ຜົນດີ ແກ່ເຂົາເຈົ້າ, ພວກເຮົາຄວນແກ້ໄຂບັນຫານີ້ເລັ່ງດ່ວນ. ການຄົ້ນຄວ້າຂອງເຮົາ ທີ່ດຳເນີນຢູ່ ສາມປະເທດເອີຣົບຕາເວັນອອກສ່ຽງໃຕ້ ໃນເດືອນ ເມສາ ເຖິງ ພະຈິກ 2006, ຈຸດປະສົງແມ່ນເພື່ອສົນທະນາວ່າ ມີການຈັດຕັ້ງການປົກປ້ອງຜູ້ຖືກເຄາະຮ້າຍແນວໃດ ແລະ ຈະສາມາດເຮັດແນວໃດເພື່ອປັບປຸງການຕອບສະໜອງຄວາມຕ້ອງການ ຂອງປະຊາຊົນ ທີ່ມີຄວາມແຕກຕ່າງກັນ ເຊິ່ງກາຍເປັນ 'ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.'

ເປັນຫຍັງຈຶ່ງເຜີຍແຜ່ຜົນການສຶກສາຂອງເອີຣົບ ຢູ່ ອາຊີ, ເພາະມີຄວາມແຕກຕ່າງດ້ານວັດທະນະທຳ, ສັງຄົມ ແລະການເມືອງຫຼາຍອັນ ລະຫວ່າງ ສອງພາກພື້ນນີ້? ມີເຫດຜົນຫຼັກ ສາມຢ່າງ:

1. ວິທີການ ແລະຂອບເຂດການວິໄຈໄດ້ໃຫ້ສິ່ງທີ່ຄົ້ນພົບທີ່ເປັນປະໂຫຍດຫຼາຍ ສຳລັບການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ບໍ່ພຽງແຕ່ ໃນເອີຣົບ ແຕ່ ຍັງສຳລັບ ຂອບເຂດກວ້າງກວ່າ.
2. ການຄົ້ນຄວ້າເນັ້ນຄວາມສຳຄັນຂອງຄວາມເຂົ້າໃຈຄວາມຕ້ອງການ ແລະການຕັດສິນໃຈ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ພ້ອມທັງ ດັດປັບວິທີການ ແລະການວິໄຈ ຄ້າຍຄືກັນທີ່ເປັນປະໂຫຍດສຳລັບ ການປົກປ້ອງຜູ້ຖືກເຄາະຮ້າຍ ໃນທົ່ວໂລກ. ການມີວິທີການທີ່ເປັນມາດຕະຖານຍັງຈະອະນຸຍາດໃຫ້ມີການວິໄຈແບບສົມທຽບ ລະຫວ່າງປະເທດ.
3. ໃນຂະນະທີ່ຄວາມຕ້ອງການ, ຄວາມປະສົງ ແລະສະພາບການ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນອາຊີຕາເວັນອອກສ່ຽງໃຕ້ ອາດແຕກຕ່າງ ຈາກຜູ້ທີ່ຢູ່ ເອີຣົບ, ຄວາມຢ້ານກົວ, ຂາດຄວາມຮັບຮູ້, ພັນທະຕໍ່ຄອບຄົວ ແລະປາດຖະໜາທີ່ຈະມີຊີວິດທີ່ດີກວ່າ ແມ່ນເປັນອັນດຽວກັນ, ແລະເປັນສິ່ງສຳຄັນທີ່ຕ້ອງຮັບຮູ້ວ່າ ປັດໃຈເຫຼົ່ານີ້ ສາມາດກະທົບການຕັດສິນບັນຫາ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ສະເໜີ ກ່ຽວກັບການລົງຢັ້ງມຢາມສະຖານທີ່ ແລະກຸ່ມເລືອກສຳພາດ ໂດຍສັງເຂບ**

- **ການຢັ້ງມຢາມສະຖານທີ່:** ອານບານີ, ໂມນດາວີ, (ປະເທດຕົ້ນທາງ); ເຊີເບຍ (ທາງຜ່ານ/ປາຍທາງ/ຕົ້ນທາງ) – ການສຳພາດໃນເມືອງຫຼວງ ບວກກັບ ບາງເມືອງ ແລະບ້ານ. ມີການຢັ້ງມຢາມແຕ່ລະປະເທດ ສອງຄັ້ງ ເປັນເວລາ 1 ອາທິດ ຊຶ່ງມີການສຳພາດຄືນໃໝ່ຜູ້ທີ່ເຄີຍສຳພາດກ່ອນ, ພ້ອມທັງ ຢັ້ງມຢາມຜູ້ທີ່ສຳພາດໃໝ່ ແລະສະຖານທີ່ໃໝ່ ທີ່ໄດ້ຖືກລະບຸໃນລະຫວ່າງການຢັ້ງມຢາມຄັ້ງທຳອິດ.
- **ຜູ້ທີ່ຖືກສຳພາດ:** ແມ່ຍິງ ທີ່ຖືກຄ້າ ແລະສ່ຽງໃນການຈະຖືກຄ້າ 52 ຄົນ; ພະນັກງານລັດ ແລະທີ່ບໍ່ສັງກັດລັດ 90 ຄົນ ທີ່ເຮັດວຽກພົວພັນກັບການຊ່ວຍເຫຼືອ.

| | |
|---|---|
| **ຈຳນວນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ຖືກສຳພາດ** | 39 |
| **ຈຳນວນຜູ້ຂາຍບໍລິການທາງເພດຂ້າງຖະໜົນທີ່ຖືກສຳພາດ; ສະຖານະພາບການຖືກຄ້າຍັງບໍ່ຈະແຈ້ງ** | 13 |
| *ຈຳນວນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະຜູ້ຂາຍບໍລິການທີ່ຖືກສຳພາດສອງເທື່ອ* | *7* |
| *ຈຳນວນຜູ້ທີ່ຍອມຮັບການຊ່ວຍເຫຼືອ ໃນເວລາທີ່ສຳພາດ* | *30* |
| *ຈຳນວນຜູ້ທີ່ບໍ່ເຄີຍຖືກລະບຸວ່າເປັນຜູ້ຖືກຄ້າ ແລະບໍ່ໄດ້ຮັບການຊ່ວຍເຫຼືອຈັກເທື່ອ* | *7* |
| *ຈຳນວນຜູ້ທີ່ຖືກລະບຸວ່າເປັນຜູ້ຖືກຄ້າ ແຕ່ປະຕິເສດການຊ່ວຍເຫຼືອ* | *2* |
| **ຈຳນວນນັກສັງຄົມສົງເຄາະ, ຈິດຕະວິທະຍາ, ພະນັກງານແພດ, ນັກກົດໝາຍ ແລະ ຕຳຫຼວດ ທີ່ຖືກສຳພາດ** | 90 |
| *ຈຳນວນນັກສັງຄົມສົງເຄາະ, ຕຳຫຼວດ ແລະຜູ້ທີ່ພົວພັນກັບໂຄງການຊ່ວຍເຫຼືອທີ່ຖືກສຳພາດສອງຄັ້ງ* | *11* |

## *ວິທີການ*

**ບາດກ້າວ ທີ 1: ການສຳພາດພະນັກງານຫຼັກແຫຼ່ງໃນອົງການທີ່ໃຫ້ການຊ່ວຍເຫຼືອ** ແລະຜູ້ທີ່ມີສ່ວນຮ່ວມໃນການຕ້ານການຄ້າມະນຸດ: 35 ອົງການຈັດຕັ້ງ ໃນສາມປະເທດ, ທີ່ມີປະສົບການກວ້າງຂວາງ ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ບາດກ້າວ ທີ 2: ການລະດົມຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**ມາສຳພາດ ໂດຍການຊ່ວຍເຫຼືອຂອງອົງການທີ່ໃຫ້ການຊ່ວຍເຫຼືອ 10 ອົງການ. ໄດ້ມີການເຫັນດີວ່າ ຈະບໍ່ເອົາມາສຳພາດຜູ້ທີ່ບໍ່ຢູ່ໃນຂົງເຂດ ໃຫ້ການຊ່ວຍເຫຼືອນີ້ ຕົວຢ່າງ ໂດຍຜ່ານສູນສັງຄົມສົງເຄາະ, ກຸ່ມຊຸມຊົນ ຫຼື ຜູ້ມີສ່ວນຮ່ວມໃນທ້ອງຖິ່ນອື່ນ – ຊຶ່ງອາດເປີດເຜີຍໃຫ້ຊຸມຊົນເຂົາເຈົ້າຟັງວ່າ ບຸກຄົນເຫຼົ່ານີ້ ເຄີຍເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຊຶ່ງອາດເຮັດໃຫ້ມີການລັງກຽດ ແລະບັນຫາອື່ນຕາມມາ.

**ບາດກ້າວ ທີ 3: ການສຳພາດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເຮັດດ້ວຍຄວາມລະອັງດ້ານຈັນຍາບັນ.** ເພື່ອຮັບປະກັນຄວາມເຫັນດີ ຂອງຜູ້ຖືກສຳພາດ, ໄດ້ມີການແຈກຢາຍແບບຟອມ ກ່ຽວກັບໂຄງການຄົ້ນຄວ້າເປັນພາສາທ້ອງຖິ່ນ ໃຫ້ຜູ້ທີ່ຈະຖືກສຳພາດ. ໄດ້ມີການທວນຄືນຂໍ້ມູນປາກເປົ່າໃຫ້ຜູ້ຖືກສຳພາດອີກ ໃນຖານະເປັນການສະເໜີຕົວ ແລະໃຫ້ມີເວລາໃນຕອນທ້າຍອີກ ສຳລັບໃຫ້ຜູ້ຖືກສຳພາດຖາມ ແລະ

ຂໍຄວາມກະຈ່າງແຈ້ງ ວ່າຈະສາມາດຕິດຕໍ່ພວກເຮົາອີກໄດ້ແນວໃດ ຖ້າມີຄວາມກັງວົນເກີດຂຶ້ນ ກ່ຽວກັບຜົນຂອງການສໍາພາດ ຫຼື ການຄົ້ນຄວ້າ.

**ບັນຫາດ້ານຈັນຍາບັນ ແລະຄວາມລໍາອຽງໃນການລະດົມຜູ້ຖືກເຄາະຮ້າຍຈາກການຄ້າມະນຸດມາສໍາພາດ**

ມີຄວາມແຕກຕ່າງກັນຫຼາຍ ລະຫວ່າງອົງການຕ່າງໆ ໃນດ້ານຄວາມຕ້ອງການຂອງເຂົາເຈົ້າໃນການຖາມຜູ້ທີ່ເຂົາເຈົ້າຊ່ວຍເຫຼືອ ວ່າຢາກເຂົ້າຮ່ວມໃນການຄົ້ນຄວ້າບໍ່, ເຊັ່ນດຽວກັບຄວາມຕ້ອງການຂອງເຂົາເຈົ້າໃນການເວົ້າຢ່າງເປີດເຜີຍ ກ່ຽວກັບວຽກງານ ແລະປະສົບການທີ່ມີຜູ້ຖືເຄາະຮ້າຍປະຕິເສດການບໍລິການ. ບາງທີບໍ່ແມ່ນເລື່ອງແປກ, ອົງການຈັດຕັ້ງຕ່າງໆ ທີ່ ບໍ່ມີຄວາມໂປ່ງໃສ ກ່ຽວກັບວຽກຂອງເຂົາເຈົ້າ ກໍ່ບໍ່ຢາກແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບໂຄງການຄົ້ນຄວ້າກັບຜູ້ທີ່ເຂົາເຈົ້າ ໃຫ້ການຊ່ວຍເຫຼືອ, ແລະຕັດສິນໃຈຕາງຜູ້ທີ່ເຂົາໃຫ້ການຊ່ວຍເຫຼືອ ແທນທີ່ຈະອະນຸຍາດໃຫ້ເຂົາເລືອກດ້ວຍຕົວເອງ. ເປັນເລື່ອງຍາກທີ່ຈະເວົ້າວ່າຂໍ້ມູນຂອງພວກເຮົາແມ່ນໄດ້ມາຈາກຜູ້ຖືກສໍາພາດຫຼາກຫຼາຍຈາກຫຼາຍອົງການຈັດຕັ້ງ ແລະຕົວແບບ ຂອງການບໍລິການຫຼາກຫຼາຍ. ເຖິງແນວໃດກໍ່ຕາມ, ການເຂົ້າເຖິງຜູ້ໃຫ້ສໍາພາດທີ່ບໍ່ທົ່ວເຖິງຍ້ອນຂຶ້ນກັບການຕັດສິນໃຈຂອງ ອົງການຈັດຕັ້ງທີ່ຊ່ວຍເຫຼືອເຂົາເຈົ້າ ຄວນເປັນບັນຫາທີ່ຕ້ອງໄດ້ຄໍານຶງເຖິງໃນການສຶກສາການຄ້າມະນຸດໂດຍລວມ.

ຍັງມີການຍົກບັນຫາຂຶ້ນ: ອົງການຈັດຕັ້ງຈະສາມາດຄວບຄຸມ ແລະຕັດສິນການພົວພັນຂອງຜູ້ທີ່ເຂົາເຈົ້າຊ່ວຍເຫຼືອກັບ ໂລກພາຍນອກ ໄດ້ເຖິງລະດັບໃດ, ລວມທັງ ການເຂົ້າຮ່ວມໃນການຄົ້ນຄວ້າ?

***ການຄົ້ນພົບຕົ້ນຕໍ: ມີຫຼາຍສາຍເຫດ ສໍາລັບການປະຕິເສດຄວາມຊ່ວຍເຫຼືອ, ເຊິ່ງແບ່ງເປັນສາມປະເພດ: (1) ສະພາບສ່ວນຕົວ; (2) ຄວາມຫຍຸ້ງຍາກຕ່າງໆ ໃນການປົກປ້ອງຜູ້ຖືກເຄາະຮ້າຍ; ແລະ (3) ເງື່ອນໄຂທາງສັງຄົມ ແລະປະສົບການສ່ວນຕົວ ຊຶ່ງເປັນອຸປະສັກຂອງການຊ່ວຍເຫຼືອ***

### *ສະພາບສ່ວນຕົວ ຊັກຈູງຜູ້ຖືກເຄາະຮ້າຍໄປສູ່ ການປະຕິເສດຄວາມຊ່ວຍເຫຼືອ*

**ການຮັບເອົາການຊ່ວຍເຫຼືອເຮັດໃຫ້ບໍ່ສາມາດເຂົ້າເມືອງໄດ້ອີກ.** ແມ່ຍິງທີ່ຖືກຄ້າກັບຄືນປະເທດພາຍໃຕ້ຫຼາຍສະພາບ. ໃນຫຼາຍກໍລະນີ ການອອກຈາກບ້ານຂອງເຂົາເຈົ້າ (ຊຶ່ງເຮັດໃຫ້ຖືກຄ້າ) ແມ່ນເພື່ອໄປຫາເງິນ, ໃນບາງກໍລະນີ ແມ່ນໜີຈາກສະພາບທຸກຍາກຢູ່ບ້ານ. ສ່ວນໃຫຍ່ບໍ່ແມ່ນຍ້ອນສະພາບ ຫຼື ຄວາມຫຍຸ້ງຍາກຢູ່ບ້ານເກີດ ແຕ່ ກໍ່ຍັງຢາກອອກໄປຕ່າງປະເທດ. ສິ່ງເຫຼົ່ານີ້ ສ່ວນຫຼາຍແມ່ນພວກທີ່ຕິດໜີ້ ຊຶ່ງເຮັດໃຫ້ການຄ້າມະນຸດເພີ່ມຂຶ້ນ ບວກກັບສະພາບຫຍຸ້ງຍາກຢູ່ບ້ານເກີດ. ນອກຈາກນັ້ນ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ໄດ້ຫຼຸດພົ້ນຈາກການຖືກຄ້າຍ້ອນເຂົາເຈົ້າ ຖືກລະບຸຕົວກ່ອນແລ້ວ. ພວກເຂົາອາດຈະເປັນຜູ້ສ້າງຜົນກໍາໄລໃຫ້ພວກຄ້າມະນຸດອີກໃນອະນາຄົດ, ບາງຄັ້ງຍ້ອນຕິດໜີ້ຫຼາຍກ່ອນເກົ່າຍ້ອນຄ່າໃຊ້ຈ່າຍໃນການຖືກຄ້າ/ອອກຈາກປະເທດອີກຄັ້ງ. ນອກນັ້ນ, ໃນຫຼາຍກໍລະນີ, ແມ່ຍິງ ທີ່ຖືກຄ້າບໍ່ຖືກຄວບຄຸມ ທາງຮ່າງກາຍຫຼາຍ ແລະຖືກຄວບຄຸມທາງຈິດຕະສາດ, ສ່ວນໃຫຍ່ໃນຮູບການຂົ່ມຂູ່. ການຖືກສົ່ງກັບບ້ານຄືນໂດຍທົ່ວໄປຈະບໍ່ປ່ຽນແປງສະພາບການຂອງແມ່ຍິງ ຕໍ່ໜ້າຜູ້ຄ້າມະນຸດ ແລະແມ່ຍິງຄົນນັ້ນ ຈະບໍ່ຮູ້ ສຶກເປັນອິດສະຫຼະທີ່ຈະຮັບການຊ່ວຍເຫຼືອ ຫຼື ບອກວ່າໃຜເປັນຜູ້ຄ້າ ເຖິງວ່ານາງຈະເບິ່ງຄືເປັນອິດສະຫຼະ ແລ້ວກໍ່ຕາມ.

**ການພົວພັນກັບຄອບຄົວ ພາໄປສູ່ການປະຕິເສດການຊ່ວຍເຫຼືອ.** ຄອບຄົວມີບົດບາດສໍາຄັນໃນການຕັດສິນໃຈ ກ່ຽວກັບການຊ່ວຍເຫຼືອ, ບາງຄັ້ງເຮັດໃຫ້ບໍ່ຢາກຮັບການຊ່ວຍເຫຼືອ, ບາງຄັ້ງເຮັດໃຫ້ຕັດສິນໃຈຮັບ. ພວກເຮົາພົບໃນຫຼາຍກໍລະນີ ວ່າ ຄອບຄົວບໍ່ໃຫ້ຜູ້ຖືກເຄາະຮ້າຍຮັບການຊ່ວຍເຫຼືອ. ການປະຕິເສດການ

ຊ່ວຍເຫຼືອເພື່ອກັບຄືນສູ່ຄອບຄົວ, ບາງຄັ້ງປະຕິເສດຍ້ອນຕ້ອງໃຊ້ໜີ້ຢູ່, ຍ້ອນການຮັບການຊ່ວຍເຫຼືອ ຕ້ອງມີຜົນທາງລົບຫຼາຍ. ຜົນກະທົບສາມາດເປັນ *ທາງອາລົມ* ທີ່ຜູ້ຖືກເຄາະຮ້າຍຕ້ອງ ປະເຊີນໃນຄອບຄົວ ຂອງຕົນເອງ. ນອກນັ້ນ ຍັງມີ *ຜົນກະທົບທາງສັງຄົມ*, ຕົວຢ່າງ ໃນເວລາທີ່ຜູ້ໃຫ້ບໍລິການຊ່ວຍເຫຼືອຮຽກຮ້ອງໃຫ້ຜູ້ໄດ້ຮັບ ການຊ່ວຍເຫຼືອມີການພົວພັນທີ່ຈຳກັດ ກັບຄອບຄົວຂອງຕົນ (ຢ່າງໜ້ອຍໃນເວລາທີ່ຢູ່ໃນສູນຟື້ນຟູ) ແລະສາມາດພົບຄອບຄົວໄດ້ ໃນສະພາບແວດລ້ອມທີ່ມີການຄວບຄຸມ, ຕົວຢ່າງ ໃນສະຖານນີ ຕຳຫຼວດ. ອາດມີ *ຜົນຕາມມາດ້ານການເງິນ*, ຍ້ອນການຮັບການຊ່ວຍເຫຼືອ ເຮັດໃຫ້ຜູ້ຖືກເຄາະຮ້າຍບໍ່ສາມາດຫາເງິນໄດ້, ຢ່າງໜ້ອຍໃນຕອນຕົ້ນ ຂອງການຮັບການຊ່ວຍເຫຼືອ. ຜົນກະທົບເຫຼົ່ານີ້ ເຮັດໃຫ້ເປັນໄປບໍ່ໄດ້ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຈະໄດ້ຮັບຄວາມຊ່ວຍເຫຼືອ.

ນອກຈາກນັ້ນ, ຜູ້ຖືກເຄາະຮ້າຍຍັງຢາກກັບຄືນສູ່ຄອບຄົວທັນທີ ແຕ່ອາດພົບວ່າສາຍພົວພັນມີການປ່ຽນແປງ ຫຼື ເຂົາເຈົ້າປະເຊີນບັນຫາຕ່າງໆ ຢູ່ບ້ານ ຊຶ່ງຮຽກຮ້ອງໃຫ້ມີການປະຕິບັດງານບາງຢ່າງ. ໃນກໍລະນີດັ່ງກ່າວ, ແມ່ຍິງອາດປະຕິເສດຄວາມຊ່ວຍເຫຼືອໃນຕອນຕົ້ນ ແຕ່ ຕໍ່ມາກໍ່ຮັບຄວາມຊ່ວຍເຫຼືອ, ຕ້ອງຖືວ່າເປັນສິ່ງຕ້ອງເຮັດໃນການໃຫ້ຂໍ້ມູນຂ່າວສານ ເພື່ອຊອກການຊ່ວຍເຫຼືອທີ່ແທດເໝາະທີ່ສຸດ ໃນຂັ້ນຕໍ່ໄປ. ໃນຫຼາຍກໍລະນີ, ໃນເວລາທີ່ແມ່ຍິງ ທີ່ຖືກຄ້າກັບຄືນບ້ານ, ຄອບຄົວຈະບໍ່ຮູ້ ຫຼື ຮູ້ໜ້ອຍວ່ານາງໄດ້ພົບອັນໃດມາແດ່. ຜູ້ຖືກເຄາະຮ້າຍພົບວ່າຍາກທີ່ຈະບອກຄອບຄົວໄດ້ ວ່າເກີດຫຍັງຂຶ້ນ, ຊຶ່ງສາມາດກໍ່ໃຫ້ເກີດຄວາມເຄັ່ງຕຶງ ແລະເຂົ້າໃຈຜິດ ແລະຄອບຄົວຈະບໍ່ຮັບຮູ້ວ່າ ແມ່ຍິງຄົນນັ້ນຕ້ອງການຄວາມຊ່ວຍເຫຼືອ.

**ຜູ້ຖືກເຄາະຮ້າຍບໍ່ຕ້ອງການຄວາມຊ່ວຍເຫຼືອ.** ໜຶ່ງເຫດຜົນ ທີ່ຜູ້ຖືກເຄາະຮ້າຍອາດບໍ່ຮັບຄວາມຊ່ວຍເຫຼືອແມ່ນເຂົາເຈົ້າ (ແລະ/ຫຼືຄອບຄົວ) ຕັດສິນໃຈວ່າບໍ່ຕ້ອງການຄວາມຊ່ວຍເຫຼືອທີ່ສະເໜີໃຫ້. ໃນບາງກໍລະນີ, ການຊ່ວຍເຫຼືອບໍ່ຈຳເປັນ/ບໍ່ຕ້ອງການ ແລະແມ່ຍິງຕ້ອງການແກ້ໄຂບັນຫາດ້ວຍຕົວເອງ ແລະໃຊ້ຊີວິດຕໍ່ໄປ. ກໍລະນີອື່ນ, ໃນຂະນະທີ່ຜູ້ຖືກເຄາະຮ້າຍອາດຕ້ອງການຄວາມຊ່ວຍເຫຼືອ, ນາງສາມາດເຂົ້າເຖິງທາງເລືອກອື່ນ ຂອງການຊ່ວຍເຫຼືອ ແລະບໍ່ຕ້ອງການຄວາມຊ່ວຍເຫຼືອທາງການ ທີ່ຜູ້ມີສ່ວນຮ່ວມໃນການ ຕ້ານການຄ້າມະນຸດສະເໜີໃຫ້. ຊຶ່ງອາດເປັນການຊ່ວຍເຫຼືອຂອງຄອບຄົວ, ການສະໜັບສະໜູນຈາກເຄືອຂ່າຍສັງຄົມ, ການຊ່ວຍເຫຼືອຂອງຊຸມຊົນ ຫຼື ການບໍລິການອື່ນທີ່ບໍ່ກ່ຽວຂ້ອງກັບການຄ້າມະນຸດ. ໃນຕົວຈິງ, ໄດ້ມີການເຫັນດີນຳກັນວ່າ ມີທາງເລືອກອື່ນ ຊຶ່ງຜູ້ຖືກເຄາະຮ້າຍມັກທີ່ຈະໃຊ້. ການຊ່ວຍເຫຼືອທີ່ບໍ່ສະເພາະສຳລັບການຄ້າມະນຸດ ທີ່ເລັງໃສ່ປະຊາກອນທົ່ວໄປ ໄດ້ຮັບການຕີລາຄາເປັນພິເສດ.

## *ຄວາມຫຍຸ້ງຍາກຕ່າງໆ ໃນການປົກປ້ອງຜູ້ຖືກເຄາະຮ້າຍນຳຜູ້ຖືກເຄາະຮ້າຍໄປສູ່ ການປະຕິເສດຄວາມຊ່ວຍເຫຼືອ*

**ບັນຫາຂອງຂໍ້ມູນຂ່າວສານ ແລະການສື່ສານ.** ບໍ່ເຂົ້າໃຈການບໍລິການທີ່ສະເໜີ ຊຶ່ງເປັນເຫດໂດຍລວມສຳລັບ ຜູ້ຖືກເຄາະຮ້າຍບາງຄົນ ທີ່ປະຕິເສດການຊ່ວຍເຫຼືອ. ແມ່ນແຕ່ຜູ້ຖືກເຄາະຮ້າຍ ທີ່ຮັບເອົາການຊ່ວຍເຫຼືອ, ຫຼື ມີທາງເລືອກໜ້ອຍ ຕ້ອງໄດ້ຮັບການຊ່ວຍເຫຼືອຍ້ອນ ສະຖານະພາບທີ່ເປັນຜູ້ເຂົ້າເມືອງ ຜິດກົດໝາຍ, ສະແດງໃຫ້ເຫັນເຖິງຄວາມສັບສົນໃນລະດັບສູງ ໃນເວລາທີ່ໄດ້ຮັບສະເໜີການຊ່ວຍເຫຼືອຄັ້ງທຳອິດ. ການສຳຫຼວດພົບວ່າ ແມ່ຍິງທີ່ຖືກຄ້າ ສະແດງຄວາມຄິດຕ່າງໆ ກ່ຽວກັບສູນຟື້ນຟູເຊັ່ນ: “ເຮືອນທີ່ ເຕັມໄປດ້ວຍຄົນ, ເດັກນ້ອຍ ແລະເດັກຍິງ ແລະເຕັມໄປດ້ວຍກ້ອງຖ່າຍຮູບ”; “ຫ້ອງຂັງທີ່ມີຕາໜ່າງຂັ້ນ”, “ການຫຼອກລວງ” ຫຼື “ບ້ານທີ່ມີຄົນຈຳນວນຫຼວງຫຼາຍ.” ບາງຄົນບໍ່ແນ່ໃຈວ່າເຂົາເຈົ້າຖືກຈັບບໍ່ ໃນເວລາທີ່ເຂົາເຈົ້າຕົກ ລົງຮັບເອົາຄວາມຊ່ວຍເຫຼືອ, ບໍ່ແນ່ໃຈວ່າຕົນຈະໄວ້ໃຈຜູ້ໃຫ້ບໍລິການ ຫຼື ຕຳຫຼວດໄດ້ບໍ່ ແລະກະທັ້ງກັງວົນກ່ຽວກັບ ວ່າຈະຖືກຄ້າອີກຄັ້ງໜຶ່ງ. ຄວາມສັບສົນນີ້ ສ່ວນໜຶ່ງເກີດຈາກຄວາມບໍ່ມີປະສິດທິຜົນ

ຫຼື ຄວາມ ສັບສົນ ຂອງການສື່ສານ. ໂດຍທົ່ວໄປແລ້ວ, ການຊ່ວຍເຫຼືອຖືກອະທິບາຍປາກເປົ່າ ໂດຍລວມໆ ແລະຜູ້ຖືກເຄາະຮ້າຍຈຳນວນໜ້ອຍ ທີ່ໄດ້ຮັບຂໍ້ມູນຂ່າວສານເປັນລາຍລັກອັກສອນ ກ່ຽວກັບທາງເລືອກ ຂອງການຊ່ວຍເຫຼືອ. ຍັງມີບັນຫາ ທີ່ພົວພັນກັບສະພາບຂອງຜູ້ຖືກເຄາະຮ້າຍແຕ່ລະຄົນ: ສະພາບທາງ ຈິດໃຈ, ຄວາມສາມາດເຂົ້າໃຈ, ອຸປະສັກດ້ານພາສາ ແລະການຂາດຄວາມຮູ້ ແລະປະສົບການ ກ່ຽວກັບ ການຊ່ວຍເຫຼືອ.

**ອີງການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອ.** ປະສົບການ ແລະຄວາມເປັນມາຂອງແມ່ຍິງທີ່ຖືກຄ້າ ແຕກຕ່າງກັນ ຫຼາຍ. ຜູ້ທີ່ເຮົາສຳພາດ ແຕກຕ່າງກັນດ້ານອາຍຸ, ສະພາບດ້ານເສດຖະກິດ, ການສຶກສາ, ສາຍພົວພັນ ດ້ານຄອບຄົວ, ປະສົບການຖືກຄ້າ ແລະອື່ນໆ. ອີງຕາມຄວາມຫຼາກຫຼາຍເປັນເລື່ອງບໍ່ຍາກທີ່ຈະເຫັນໄດ້ ວ່າ *ວິທີດຽວບໍ່ໃຊ້ໄດ້ສຳລັບທຸກຄົນ* ໃນດ້ານການຕອບສະໜອງຄວາມຕ້ອງການ, ຊຶ່ງເຮັດໃຫ້ມີສິ່ງ ທ້າທາຍ ສຳລັບຜູ້ໃຫ້ບໍລິການໃນການເຮັດວຽກກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຜູ້ຖືກເຄາະຮ້າຍ ຈາກການ ຄ້າມະນຸດຫຼາຍຄົນປະຕິເສດການຊ່ວຍເຫຼືອຍ້ອນບໍ່ສາມາດ ຫຼື ບໍ່ຕ້ອງຮັບການຊ່ວຍເຫຼືອໃນຮູບ ແບບ ທີ່ຖືກສະເໜີ, ຍ້ອນຄວາມຕ້ອງການພິເສດສະເພາະ ຂອງຜູ້ຖືກເຄາະຮ້າຍແຕ່ລະຄົນ ບໍ່ໄດ້ຖືກກຳນົດ ໃນແຜນກິດຈະກຳ. ມັນອາດບໍ່ແມ່ນກ່ຽວກັບລັກສະນະ ແລະເນື້ອໃນ ຂອງການຊ່ວຍເຫຼືອ ແຕ່ແມ່ນ ວິທີການສະເໜີ ໃຫ້ການຊ່ວຍເຫຼືອຫຼາຍກວ່າ: ກິດຈະກຳຊ່ວຍເຫຼືອຜູ້ຢູ່ໃນສູນຟື້ນຟູ; ໃນເມືອງຫຼວງ ຊຶ່ງ ໄກຈາກຄອບຄົວ; ແລະຕ້ອງໄດ້ໃຊ້ເວລາຫຼາຍ, ຊຶ່ງຜູ້ຖືກເຄາະຮ້າຍບໍ່ສາມາດເຮັດໄດ້ ຍ້ອນຕອ້ງ ເຮັດວຽກ ແລະຊ່ວຍເຫຼືອຄອບຄົວຂອງຕົນ.

ມັນເປັນເລື່ອງທີ່ເຂົ້າໃຈຍາກ, ໃນເວລາທີ່ຜູ້ຖືກເຄາະຮ້າຍຖືກສະເໜີຄວາມຊ່ວຍເຫຼືອ ບາງຄັ້ງຄ້າຍຄືກັບ ຂະບວນການ ຄ້າມະນຸດ, ແລະສາມາດພາໃຫ້ເກີດຄວາມກົດດັນ ແລະຄວາມຢ້ານກົວ. ມີການໃຫ້ ຄຳ ໝັ້ນສັນຍາໃຫ້ການຊ່ວຍເຫຼືອຄ້າຍຄືກັນ, ຜູ້ຖືກເຄາະຮ້າຍຖືກຂົນສົ່ງ ແລະ ຊ່ວຍເພື່ອໃຫ້ມີ ຊີວິດດີຂຶ້ນ. ຜູ້ໃຫ້ສຳພາດຫຼາຍຄົນ ຢ້ານວ່າເຂົາເຈົ້າກຳລັງຖືກຄ້າຄືນອີກ ໃນເວລາທີ່ເຂົາຖືກສົ່ງເຂົ້າໄປຢູ່ໃນສູນ ຫຼື ສະ ຖານີຕຳຫຼວດ. ໃນບາງກໍລະນີ, ການຊ່ວຍເຫຼືອບໍ່ໄດ້ຄຳນຶງພຽງພໍ ກ່ຽວກັບຄວາມຢ້ານກົວຂອງຜູ້ຖືກເຄາະ ຮ້າຍ ທີ່ມີຕໍ່ຜູ້ຄ້າມະນຸດ. ສ່ວນຫຼາຍ ຜູ້ຖືກເຄາະຮ້າຍບໍ່ກ້າຈະຮັບການຊ່ວຍເຫຼືອ ຍ້ອນຜູ້ຄ້າມະນຸດ ຈະເຂົ້າ ໃຈຜິດວ່າເຂົາເຈົ້າໃຫ້ການຮ່ວມມື ກັບເຈົ້າໜ້າທີ່ ແລະຈະເຮັດໃຫ້ຜູ້ຄ້າມະນຸດມາແກ້ແຄ້ນຕົນ ຫຼື ຄອບຄົວ.

**ສາຍການພົວພັນລະຫວ່າງຜູ້ໃຫ້ບໍລິການ ແລະຜູ້ຮັບບໍລິການ.** ໃນບາງສະພາບ ການຄົ້ນຄວ້າຂອງພວກ ເຮົາຄົ້ນພົບວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດບໍ່ໄດ້ປະຕິເສດການຊ່ວຍເຫຼືອສະເໝີໄປ ແຕ່ຜູ້ໃຫ້ບໍ ລິການຕ່າງຫາກ ທີ່ປະຕິເສດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນບາງກໍລະນີ, ຜູ້ຖືກເຄາະຮ້າຍບໍ່ ຖືກລວມເຂົ້າໃນການຊ່ວຍເຫຼືອ ພາຍຫຼັງທີ່ຕັ້ງໃຈເຮັດຜິດກົດລະບຽບ, ໄດ້ມີການຕີຄວາມໝາຍ ໂດຍນັກ ສັງຄົມສົງເຄາະວ່າເປັນການປະຕິເສດ*ແບບພຶດຕິກຳ* ໃນການໃຫ້ບໍລິການ ແລະການຊ່ວຍເຫຼືອ, ແຕ່ອາດ ເຮັດໃຫ້ມີຄວາມເຄັ່ງຕຶງ ແລະຄວາມຄາດຫວັງທີ່ແຕກຕ່າງກັນ ລະຫວ່າງຜູ້ໃຫ້ບໍລິການ ແລະຜູ້ຮັບ. ແມ່ຍິງ ບາງຄົນລາຍງານ ກ່ຽວກັບພຶດຕິກຳທີ່ເປັນບັນຫາ ຂອງພະນັກງານໂຄງການ, ລວມທັງຄວາມລຳອຽງ ແລະ ຄວາມບໍ່ເອົາໃຈໃສ່ ຕໍ່ຜູ້ຖືກເຄາະຮ້າຍທີ່ຖືວ່າ ເປັນ "ໂສເພນີ", "ຄົນຕ່າງປະເທດ" ແລະ "ຜູ້ທີ່ບໍ່ມີໃຜຕ້ອງ ການ." ໃນກໍລະນີອື່ນ, ຜູ້ຮັບບໍລິການຮູ້ສຶກເປັນຜູ້ອ່ອນແອ ຍ້ອນເຂົາເຈົ້າພົບວ່າ ເງື່ອນໄຂຂອງໂຄງການ ມີ ຈຸດອ່ອນ. ສູນຫຼາຍແຫ່ງເຄັ່ງຄັດຫຼາຍ ກ່ຽວກັບກົດລະບຽບ ແລະຂໍ້ຈຳກັດ ເຊັ່ນ: ສູນແບບ "ປິດ", ຈຳກັດ ອິດ ສະຫຼະ ໃນການໄປມາ, ຈຳກັດການໂທລະສັບ ແລະການຕິດຕໍ່ກັບບຸກຄົນພາຍນອກໂຄງການ ຊຶ່ງໂດຍ ທົ່ວໄປຖືວ່າຈຳເປັນສຳລັບການປົກປ້ອງ ບໍ່ໃຫ້ມີການຂົ່ມຂູ່ ຫຼື ແກ້ແຄ້ນ.

ເຖິງແນວໃດກໍ່ຕາມ, ໃນຫຼາຍກໍລະນີການຈຳກັດເບິ່ງຄືວ່າຫຼາຍເກີນໄປ ແລະຜູ້ຖືກເຄາະຮ້າຍທີ່ໄດ້ຮັບການຊ່ວຍເຫຼືອຫຼາຍຄົນ ລາຍງານວ່າການຈຳກັດນີ້ ຫຍຸ້ງຍາກ ແລະກົດດັນ. ນອກຈາກນັ້ນ, ຄວາມຈິງທີ່ວ່າສູນອື່ນສາມາດຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍບໍ່ຈຳກັດອິດສະຫຼະພາບ ແລະບໍ່ໄດ້ລາຍງານວ່າມີບັນຫາເລື່ອງຄວາມປອດໄພ ແລະມາດຕະການຕ່າງໆ ກໍ່ຈຳເປັນ ແລະແທດເໝາະ. ຜູ້ໃຫ້ບໍລິການບາງຄົນ ອາທິບາຍວ່າ ບາງຄັ້ງເຂົາຕ້ອງໄດ້ປະຕິເສດໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຍ້ອນມີຊັບພະຍາກອນຈຳກັດ ແລະເຂົາເຈົ້າຕ້ອງສຸມໃສ່ແຕ່ຜູ້ທີ່ສະແດງໃຫ້ເຫັນວ່າຈະມີການປ່ຽນແປງໄດ້ຫຼາຍເທົ່ານັ້ນ.

## *ເງື່ອນໄຂທາງສັງຄົມ ແລະປະສົບການສ່ວນຕົວຊັກຈູງຜູ້ຖືກເຄາະຮ້າຍໄປສູ່ ການປະຕິເສດການຊ່ວຍເຫຼືອ*

**ຄວາມໄວ້ເນື້ອເຊື່ອໃຈ.** ບັນຫານີ້ມີຢູ່ທຸກຂໍ້ມູນທີ່ຄົ້ນພົບ ຍ້ອນມັນສຳຄັນທີ່ສຸດໃນການຕັດສິນໃຈວ່າຈະຮັບການຊ່ວຍເຫຼືອ ຫຼື ບໍ່. ຄວາມໄວ້ເນື້ອເຊື່ອໃຈ ເປັນພື້ນຖານຂອງວຽກງານ ຂອງອົງການທີ່ໃຫ້ການຊ່ວຍເຫຼືອ ໃນເວລາທີ່ ຂໍຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເຂົ້າຮ່ວມໂຄງການ ຫຼື ເຂົ້າໄປຢູ່ສູນ ທີ່ເຂົາ ບໍ່ເຄີຍຮູ້ຈັກມາກ່ອນ. ມີສອງແງ່ມູມ ຂອງຄວາມໄວ້ເນື້ອເຊື່ອໃຈ: ຄວາມສົງໃສກ່ຽວກັບການຊ່ວຍເຫຼືອ ແລະຂາດຄວາມໄວ້ເນື້ອເຊື່ອໃຈ ຍ້ອນປະສົບການໃນການຮັບການຊ່ວຍເຫຼືອຜ່ານມາ.

ກ່ຽວກັບຄວາມສົງໃສ, ຜູ້ຖືກເຄາະຮ້າຍຫຼາຍຄົນ (ແລະຄອບຄົວ) ບອກຄວາມສົງໃສ ຢ່າງໜ້ອຍໜຶ່ງຢ່າງ ແລະຄວາມຮູ້ສຶກບໍ່ປອດໄພ ກ່ຽວກັບປະເພດຕ່າງໆ ຂອງການດຳເນີນງານ ແລະການຊ່ວຍເຫຼືອ. ບາງຄົນສົງໃສ ຮູບແບບບາງຢ່າງຂອງການຊ່ວຍເຫຼືອ – ເຊັ່ນການຊ່ວຍເຫຼືອທາງຈິດຕະວິທະຍາ – ຊຶ່ງອາດຈະບໍ່ມີຄວາມໝາຍ ຫຼື ມີພາບພົດທາງລົບໃນສັງຄົມ. ບາງຄົນສົງໃສວ່າການບໍລິການ "ບໍ່ເສຍຄ່າ" ແຕ່ເຂົາອາດຕ້ອງມີຄ່າໃຊ້ຈ່າຍບາງອັນໃນວັນຂ້າງໜ້າ. ເຖິງຈະມີຄວາມໄວ້ເນື້ອເຊື່ອໃຈພຽງພໍໃນບາງກໍລະນີ, ກໍ່ແມ່ນຕໍ່ບາງບຸກຄົນ ຫຼື ບາງອົງການຈັດຕັ້ງ ຊຶ່ງສິ່ງເຂົາເຈົ້າຕໍ່ໃຫ້ອົງການຈັດຕັ້ງອື່ນ. ປະສົບການດ້ານລົບ ກ່ຽວກັບການຊ່ວຍເຫຼືອຜ່ານມາ, ທັງພາຍໃນຂອບການຄ້າມະນຸດ ແລະໂດຍລວມ, ຍັງມີອິດທິພົນຕໍ່ການປະຕິເສດການຊ່ວຍເຫຼືອ. ຄວນພິຈາລະນາລະດັບປະສົບການດ້ານລົບ ກ່ຽວກັບການຊ່ວຍເຫຼືອຜ່ານມາ ແລະເຊື່ອມໂຍງກັບປັດໃຈອື່ນ. ບາງທີ, ຕົວຢ່າງ, ປະສົບການດ້ານລົບອາດຈະມີຫຼາຍ ສຳລັບກຸ່ມຄົນສ່ວນນ້ອຍເຊັ່ນຊົນຊາດ ຊົນເຜົ່າ ຫຼື ຜູ້ທີ່ຂາຍບໍລິການ ແລະສະນັ້ນ ກຸ່ມຄົນສ່ວນນ້ອຍທີ່ຖືກຈຳແນກຢູ່ແລ້ວ ແລະ ຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຶ່ງຈະມີຄວາມເປັນໄປໄດ້ສູງທີ່ຈະປະຕິເສດຄວາມຊ່ວຍເຫຼືອ.

**ການລັງກຽດ ແລະຈຳແນກ.** ການຮັບຄວາມຊ່ວຍເຫຼືອ – ບໍ່ວ່າໃນສູນ ຫຼື ໃນຊຸມຊົນ (ຈາກອົງການຕ້ານການຄ້າມະນຸດ) – ສາມາດລະບຸແມ່ຍິງວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະນຳໄປສູ່ການລັງກຽດ. ນອກຈາກນັ້ນ, ການລັງກຽດຍັງກະທົບບໍ່ພຽງແຕ່ບຸກຄົນ ແຕ່ຍັງແຜ່ລາມໄປຍັງຄອບຄົວຂອງເຂົາເຈົ້າ ແລະຊຸມຊົນອີກດ້ວຍ. ໃນຂະນະທີ່ແຫຼ່ງຄວາມລັງກຽດທີ່ຈະແຈ້ງ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດແມ່ນການເປັນໂສເພນີ, ອັນໜຶ່ງອີກແມ່ນຜູ້ອົບພະຍົກ ໂດຍສະເພາະໃນປະເທດ ທີ່ມີປະຫວັດກ່ຽວກັບການອົບພະຍົກ"ທີ່ປະສົບຜົນສຳເລັດ". ເຫັນໄດ້ແຈ້ງວ່າ ການລັງກຽດຍັງສາມາດເກີດຂຶ້ນກັບແມ່ຍິງ ທີ່ *ຄາດວ່າ* ເຄີຍເຮັດຫຼາຍ ກວ່າ ຈະແມ່ນສິ່ງທີ່ນາງເຮັດແທ້ຈິງ. ໃນຫຼາຍສະພາບແວດລ້ອມ, ການອອກຈາກບ້ານ ຫຼື ເມືອງ ໃນບາງສະພາວະອາດພຽງພໍ ທີ່ຈະ"ພາໃຫ້" ຖືກລັງກຽດ, ຍ້ອນແມ່ຍິງຈະອອກຈາກເຊັ້ນກັ້ນຄວາມປະພຶດທີ່ດີ ສຳລັບແມ່ຍິງ. ການອອກຈາກບ້ານມາໃຫ້ມີການຄາດວ່າ ແມ່ຍິງຈະເປັນໂສເພນີ ເຖິງວ່າຈະບໍ່ແມ່ນກໍ່ຕາມ. ການຮັບບໍລິການ ແລະການຊ່ວຍເຫຼືອໃນຊຸມຊົນອາດພາຍໃຫ້ເກີດຄວາມອິດສາ ແລະບໍ່ພໍໃຈ ຊຶ່ງສາມາດພາໃຫ້ເກີດການລັງກຽດ. ສິ່ງນີ້ ເໜັ້ນໃຫ້ເຫັນ ການປະຕິບັດ ທີ່ຈະແຈ້ງ ເຊັ່ນ ການຊ່ວຍເຫຼືອທາງສັງຄົມ ແກ່ຜູ້ດ້ອຍໂອກາດ ຫຼາຍກວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະ

ນຸດ ເຊັ່ນດຽວກັບເປັນຍຸດທະສາດຂອງການຊ່ວຍເຫຼືອໃນຊຸມຊົນໂດຍລວມ (ຕົວຢ່າງ, ດ້ານການສຶກສາ, ການຄໍ້າປະກັນສະບຽງອາຫານ ຫຼື ການປູກຈິດສໍານຶກ) ຫຼາຍກວ່າຈະມີເປົ້າໝາຍໃສ່ບຸກຄົນ ຫຼື ຄອບຄົວໃດໜຶ່ງ.

**ການລະບຸໂຕ ກັບບົດບາດຂອງຜູ້ຖືກເຄາະຮ້າຍ.** ການຮັບຄວາມຊ່ວຍເຫຼືອໃນຫຼາຍກໍລະນີ ປ່ຽນແປງທັດສະນະ ກ່ຽວກັບຕົວຂອງຜູ້ຖືກເຄາະຮ້າຍເອງຢ່າງຫຼວງຫຼາຍ. ໜ້າສົນໃຈທີ່, ບາງຄັ້ງຄວາມເຂົ້າໃຈ ກົງກັນຂ້າມຖືກນໍາໃຊ້ ເພື່ອອະທິບາຍທາງເລືອກແບບດຽວກັນ; ແມ່ຍິງຄົນໜຶ່ງອະທິບາຍການຮັບ ການຊ່ວຍເຫຼືອໂດຍການເນັ້ນວ່າ ຕາມທໍາມະດາ ນາງຊ່ວຍຕົວເອງໄດ້ "ຂ້ອຍບໍ່ແມ່ນຄົນທີ່ມີແຕ່ຮັບຢ່າງດຽວ"; ໃນຂະນະທີ່ຄົນອື່ນອະທິບາຍການຮັບວ່າ "ຂ້ອຍບໍ່ແມ່ນຄົນທີ່ຈະປະຕິເສດທຸກຢ່າງ", ລວມທັງ ນາງ ຈະບໍ່ສູນເສຍໂອກາດແບບງ່າຍໆ ໃນການທີ່ຈະປັບປຸງຊີວິດຂອງຕົນ. ຫຼາຍຄົນເວົ້າກ່ຽວກັບການປ່ຽນແປງວິທີ ເຂົາເຈົ້າເບິ່ງຕົນເອງພາຍຫຼັງຮັບການຊ່ວຍເຫຼືອແລ້ວ – ຕົວຢ່າງ: ເຂົາເຈົ້າມີຄວາມໝັ້ນໃຈຂຶ້ນ, ທີ່ເຂົາເຈົ້າຄວນໄດ້ຮັບສິ່ງທີ່ດີກວ່າການຖືກທາລຸນທີ່ເຄີຍປະເຊີນມາ ແລະເຂົາເຈົ້າບໍ່ຮູ້ສຶກຜິດ ຫຼື ຕໍ່າຕ້ອຍ ອີກຕໍ່ໄປ.

ເຖິງແນວໃດກໍ່ຕາມ, ສໍາລັບບາງຄົນ ສະພາບແມ່ນຊັບຊ້ອນກວ່າ ແລະບໍ່ແມ່ນດ້ານບວກຢ່າງງຈະແຈ້ງສະເໝີໄປ. ການຮັບເອົາການຊ່ວຍເຫຼືອສະເພາະ ສໍາລັບຜູ້ຖືກຄ້າໝາຍເຖິງການຮັບບົດບາດ ແລະການລະບຸໂຕວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ບົດບາດນີ້ ມີຫຼາຍດ້ານ ແລະ ມີອົງປະກອບ ທີ່ອາດຈະຂັດກັນ. ອີກດ້ານໜຶ່ງ, ສ່ວນໃຫ່ຍ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຖືກລັງກຽດໃນຂະນະທີ່ ອີກດ້ານໜຶ່ງ, ຄໍາເວົ້າ ຂອງຄົນອ້ອມຂ້າງກ່ຽວກັບບັນຫານີ້ ບາງຄັ້ງມີການຍົກຍ້ອງຜູ້ຖືກເຄາະຮ້າຍຈົນເກີນໄປ. ສະນັ້ນ, ບໍ່ເປັນບົດບາດທີ່ງ່າຍ ສໍາລັບແມ່ຍິງ. ນອກຈາກນັ້ນ, ໃນລະດັບໃດໜຶ່ງ ການຮັບການຊ່ວຍເຫຼືອຍັງມີການຮັບຮູ້ຄວາມຮ້າຍແຮງ ຂອງສິ່ງທີ່ເກີດຂຶ້ນ ຊຶ່ງໃນຕົວຂອງມັນເອງ ເປັນອຸປະສັກກີດຂວາງ ທີ່ຕ້ອງຂ້າມຜ່ານ ຍ້ອນກົນໄກຕໍ່ຕ້ານທີ່ເປັນທໍາມະຊາດ ສໍາລັບປະສົບການທີ່ໜ້າຢ້ານກົວ ຊຶ່ງເຮັດໃຫ້ມີ ຄວາມກົດດັນ ແລະປະຕິເສດ. ນີ້ແມ່ນບັນຫາທີ່ພົວພັນກັບບົດບາດໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ *ແລະ* ການເປັນຜູ້ຖືກເຄາະຮ້າຍໂດຍທົ່ວໄປ ແລະໃນຖານະຂອງຜູ້ຮັບການຊ່ວຍເຫຼືອ.

## *ສະຫຼຸບ*

ຜູ້ຖືກເຄາະຮ້າຍ ທີ່ປະຕິເສດຄວາມຊ່ວຍເຫຼືອ ຢູ່ໃນຫຼາຍສະພາບການ ແລະມີຫຼາຍລັກສະນະແຕກຕ່າງກັນໄປ. ພວກເຮົາພົບວ່າ ຜູ້ຖືກເຄາະຮ້າຍຮັບຄວາມຊ່ວຍເຫຼືອ ພຽງແຕ່ໃນເວລາ ທີ່ເຂົາເຈົ້າຢູ່ໃນສະພາບທີ່ສິ້ນຫວັງທີ່ສຸດ ແລະບໍ່ມີທາງເລືອກອື່ນ. ອີກດ້ານໜຶ່ງ, ພວກເຮົາພົບວ່າ ຜູ້ທີ່ມີທາງເລືອກອື່ນ ຫຼື ການຄໍ້າປະກັນບາງຢ່າງ ຈະປະຕິເສດການຊ່ວຍເຫຼືອ ສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະຊອກ ການຊ່ວຍເຫຼືອຢູ່ບ່ອນອື່ນ. ນີ້ອາດໝາຍເຖິງບາງລັກສະນະພິເສດ ທີ່ພົວພັນກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເບິ່ງຄື *ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ໄດ້ຮັບການຊ່ວຍເຫຼືອ* ຫຼາຍກວ່າຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ ໂດຍທົ່ວໄປ. ຕົວຢ່າງ: ການສົມມຸດຕິຖານທີ່ວ່າ ຜູ້ຖືກເຄາະຮ້າຍ ສ່ວນໃຫ່ຍ ມາຈາກຄອບຄົວທີ່ມີບັນຫາ ເພາະບາງທີ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ມີສາຍພົວພັນດີໃນຄອບຄົວ ຈະກັບຄືນບ້ານ ຫຼາຍກວ່າຈະເຂົ້າມາຂໍຄວາມຊ່ວຍເຫຼືອ ແລະປະສົບການຂອງເຂົາເຈົ້າກໍ່ ຈະບໍ່ມີໃຜຮູ້.

ຄວາມແຕກຕ່າງ ລະຫວ່າງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ໄດ້ຮັບການຊ່ວຍເຫຼືອ ແລະບໍ່ໄດ້ຮັບການຊ່ວຍເຫຼືອ ມີຄວາມໝາຍ ທັງສໍາລັບການຄົ້ນຄວ້າ ແລະນະໂຍບາຍ. ມີຄວາມຕ້ອງການໃຫ່ຍຫຼວງສໍາລັບການປະເມີນ ທີ່ຖືກຕ້ອງຄວາມພະຍາຍາມການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອ

ເບິ່ງວ່າ ອັນໃດໄດ້ຮັບຜົນດີ ແລະອັນໃດບໍ່ໄດ້ຮັບຜົນດີ. ເຖິງແນວໃດກໍ່ຕາມ, ການປະເມີນຄວາມພະຍາຍາມນີ້ ບໍ່ຕ້ອງເບິ່ງພຽງແຕ່ ຜົນກະທົບ ຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ໄດ້ຮັບການຊ່ວຍເຫຼືອ ເທົ່ານັ້ນ, ແຕ່ຍັງຕ້ອງລວມຄຳຖາມ; ໃຜບໍ່ໄດ້ຮັບການຊ່ວຍເຫຼືອ, ແລະຍ້ອນຫຍັງ? ເກີດຫຍັງຂຶ້ນກັບເຂົາເຈົ້າ? ມີຄວາມແຕກຕ່າງທີ່ມີປະຈຳ ລະຫວ່າງຜູ້ຖືກເຄາະຮ້າຍທີ່ໄດ້ຮັບການຊ່ວຍເຫຼືອ ແລະບໍ່ໄດ້ຮັບ ການຊ່ວຍເຫຼືອບໍ່? ຜູ້ຖືກເຄາະຮ້າຍ ທີ່ບໍ່ໄດ້ຮັບການຊ່ວຍເຫຼືອຕ້ອງການຄວາມຊ່ວຍເຫຼືອແບບອື່ນທີ່ຕ່າງ ໄປຈາກທີ່ມີບໍ່? ບົດລາຍງານນີ້ ໃຫ້ຄຳແນະນຳ ສຳລັບລັດຖະບານ ເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສາມາດເຂົ້າຫາຄວາມຊ່ວຍເຫຼືອ ທີ່ເຂົາເຈົ້າຕ້ອງການ.

## *ບາງຄຳແນະນຳ*

**ການໃຫ້ຂໍ້ມູນຂ່າວສານທັງເປັນລາຍລັກອັກສອນ ແລະດ້ວຍປາກໃນພາສາທີ່ແທດເໝາະ, ແລະ ສະແດງໃຫ້ເຫັນເຖິງ ຄວາມໜ້າເຊື່ອຖື ໂດຍການເອົາໃຈໃສ່ຄວາມຕ້ອງການຮີບດ່ວນຂອງຜູ້ຖືກເຄາະຮ້າຍ.** ການຕິດຕໍ່ພົວພັນຄັ້ງທຳອິດກັບຜູ້ຖືກເຄາະຮ້າຍ ສ່ວນໃຫ່ຍເກີດຂຶ້ນພາຍໃຕ້ສະພາບທີ່ຊັບຊົນ ແລະມີຄວາມຊັບຊົນ ກ່ຽວກັບສິ່ງທີ່ພວມເກີດຂຶ້ນ, ແລະບໍ່ຮູ້ວ່າໃຜຈະເປັນຜູ້ໃຫ້ການຊ່ວຍເຫຼືອ ທີ່ແທ້ຈິງ. ຜົນສຳເລັດໃນການສະເໜີການຊ່ວຍເຫຼືອ ຂຶ້ນກັບຄວາມສາມາດໃນການໃຫ້ຂໍ້ມູນຂ່າວສານ ແລະສ້າງຄວາມເຊື່ອໝັ້ນ ໃນເວລາທີ່ຜູ້ຖືກເຄາະຮ້າຍອາດມີຄວາມຊັບສົນ ແລະຕື່ນຕົກໃຈ, ດ້ວຍຄວາມສາມາດຈຳກັດທີ່ຈະຮູ້ໄດ້ຜົນຕາມມາ ຂອງການຮັບ ຫຼື ປະຕິເສດຄວາມຊ່ວຍເຫຼືອ. ເອກະສານຄວນຖືກສະໜອງໃຫ້ຕາມຄວາມເໝາະສົມດ້ານອາຍຸ, ພາສາ ແລະການສຶກສາ ຊຶ່ງອະທິບາຍວ່າມີການຊ່ວຍເຫຼືອໃດແດ່, ຜູ້ມີສ່ວນຮ່ວມຕ່າງໆ ໃນຂະບວນການ ແລະສິດທິ ຂອງຜູ້ຖືກເຄາະຮ້າຍ. ສາມາດໄດ້ຮັບເອກະສານໄດ້ໃນຂັ້ນຕໍ່ໄປ ແລະຫວັງວ່າ ຈະມີໃຫ້ສະໝໍ່າສະເໝີພາຍ, ເຖິງວ່າໃນຕອນຕົ້ນນາງອາດຈະປະຕິເສດການຊ່ວຍເຫຼືອ. ໃນການສ້າງຄວາມເຊື່ອໝັ້ນ, ບາດກ້າວໜຶ່ງ ຈະແມ່ນການລະບຸ ແລະແກ້ໄຂຄວາມຕ້ອງການຮີບດ່ວນ ຂອງຜູ້ຖືກເຄາະຮ້າຍ, ຕົວຢ່າງ ດ້ານເອກະສານ, ອາຫານ ຫຼື ບັນຫາດ້ານສຸຂະພາບ, ເພື່ອສະແດງໃຫ້ ເຫັນວ່າການຊ່ວຍເຫຼືອ ບໍ່ພຽງແຕ່ແມ່ນຄວາມຈິງ ແຕ່ ມີປະສິດທິພາບອີກ. ຈຸດທີ່ຜູ້ໃຫ້ສຳພາດຫຼາຍຄົນໄດ້ຮັບການຊ່ວຍເຫຼືອ ທີ່ແທ້ຈິງເຫຼືອຄັ້ງທຳອິດ ແມ່ນໃນເວລາທີ່ເຂົາເຈົ້າຕັດສິນໃຈເຊື່ອໃຈຜູ້ໃຫ້ບໍລິການ, ສິ່ງນີ້ ມັນໜ້າເຊື່ອຖື ກ່ຽວຄຳເວົ້າຫຼາຍຄຳ ທີ່ຮັບປະກັນເຈດຕະນາທີ່ດີ.

**ພິຈາລະນາກົດເກນ ແລະຂໍ້ຈຳກັດ ຈາກທັດສະນະ ຂອງຜູ້ຖືກເຄາະຮ້າຍ.** ການນຳໃຊ້ທຸກຂໍ້ຈຳກັດຕໍ່ຜູ້ຖືກເຄາະຮ້າຍຕ້ອງຢູ່ພາຍໃຕ້ການຊີ້ນຳ ພ້ອມເຫດຜົນທີ່ຈະແຈ້ງ ສຳລັບການນຳໃຊ້, ບັນຊາ ແລະແນວທາງທີ່ເຄັ່ງຄັດ ສຳລັບການນຳໃຊ້ທີ່ແທດເໝາະ, ຮັບປະກັນສິດທິ ຂອງບຸກຄົນ ແລະການປະຕິບັດ ທີ່ມີຈັນຍາບັນ, ພ້ອມທັງ ບໍ່ມີການລະເມີດສິດທິຂອງຜູ້ຖືກເຄາະຮ້າຍ. ນອກຈາກນັ້ນ, ຍັງມີການສົນທະນາຢ່າງຈິງຈັງ ວ່າຄວນບໍ່ ແລະຍາມໃດ ການປະຕິບັດແບບນີ້ ຈະເໝາະສົມ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ມີຜົນກະທົບທາງຈິດຕະສາດອັນໃດ ແລະປະສິດທິພາບ ໃນການບັນລຸເປົ້າໝາຍ. ຖ້າຂໍ້ຈຳກັດຕ່າງໆ ຈຳເປັນຕ້ອງໃຊ້ ຄວນມີອົງກອນທາງການ ທີ່ຮັບເອົາຄຳຮ້ອງຟ້ອງ ແລະມີການໃຫ້ບຸກຄົນແລະອົງການຈັດຕັ້ງ ຕ້ອງໄດ້ຮັບຜິດຊອບ ໃນກໍລະນີມີການລະເມີດສິດທິ ຫຼື ມີບັນຫາ.

**ຄວາມຈຳເປັນ ສຳລັບການຕິດຕາມ, ຄວາມໂປ່ງໃສທີ່ກວດສອບໄດ້ ແລະການຮັບປະກັນຄຸນະພາບ.** ການປົກປ້ອງຜູ້ຖືກເຄາະຮ້າຍ ດຳເນີນໂດຍອົງການ NGO ແລະອົງການຈັດຕັ້ງສາກົນ ເປັນສ່ວນໃຫ່ຍຊຶ່ງສ່ວນຫຼາຍ ບໍ່ມີຄວາມຮັບຜິດຊອບຕໍ່ໜ້າຜູ້ໃດ ນອກຈາກຜູ້ໃຫ້ທຶນ ຂອງເຂົາເຈົ້າເທົ່ານັ້ນ, ຊຶ່ງອາດເຮັດເພື່ອຕອບສະໜອງເງື່ອນໄຂ ໃນການຮັບທຶນຕໍ່ໄປ. ມີລະບົບຈຳນວນໜ້ອຍໜຶ່ງ ສຳລັບການອອກໃບອະ

ນຸຍາດ ຜູ້ໃຫ້ບໍລິການ ແລະກົນໄກທາງການບາງຢ່າງ ສໍາລັບການຟ້ອງຮ້ອງການປະຕິບັດບໍ່ຖືກຕ້ອງ. ບວກກັບ ຄວາມເຊື່ອຂອງຜູ້ຖືກເຄາະຮ້າຍຫຼາຍຄົນທີ່ວ່າການຊ່ວຍເຫຼືອເປັນຂໍ້ບັງຄັບຕ້ອງໄດ້ຮັບ ສ້າງໃຫ້ມີພາບພົດທີ່ໜ້າກັງວົນ ວ່າມີການປົກປ້ອງສິດທິ ຂອງຜູ້ຖືກເຄາະຮ້າຍບໍ່ ແລະສ້າງພາບໃນບາງກໍລະນີວ່າ ການຊ່ວຍເຫຼືອແມ່ນການຊໍ້າເຕີມຜູ້ຖືກເຄາະຮ້າຍຮູບການໜຶ່ງ ຊຶ່ງເປັນເຫດຜົນໜຶ່ງ ທີ່ຜູ້ໃຫ້ສໍາພາດບາງຄົນປະຕິເສດຄວາມຊ່ວຍເຫຼືອ.

**ຈັດສັນຊັບພະຍາກອນພຽງພໍ ແລະພິຈາລະນາຄວາມຕ້ອງການຄວາມຊ່ວຍເຫຼືອໃນວົງກວ້າງຂຶ້ນ.** ລວມທັງຄວາມຕ້ອງການຄວາມຊ່ວຍເຫຼືອ ຂອງຄອບຄົວຜູ້ຖືກເຄາະຮ້າຍ ທີ່ອາດຊຸກຍູ້ໃຫ້ຜູ້ຖືກເຄາະຮ້າຍປະຕິເສດຄວາມຊ່ວຍເຫຼືອ, ອີກເຫດຜົນໜຶ່ງ ທີ່ເຂົາເຈົ້າປະຕິເສດແມ່ນຢາກກັບບ້ານ ແລະຊ່ວຍເຫຼືອຄອບຄົວ. ເພື່ອສ້າງຄວາມໜ້າເຊື່ອຖື ແລະແກ້ໄຂຄວາມສົງໃສ ຂອງຄອບຄົວ ກ່ຽວກັບຄວາມຊ່ວຍເຫຼືອ ແລະຜູ້ໃຫ້ບໍລິການ. ການໃຫ້ພໍ່ແມ່ ພາລູກມາຮັບການຊ່ວຍເຫຼືອກໍ່ສໍາຄັນຄືກັນ, ແຕ່ຕ້ອງໄດ້ລະມັດລະວັງວ່າຈະເຮັດວິທີໃດ. ເຖິງແນວໃດກໍ່ຕາມ, ຜູ້ໃຫ້ບໍລິການຫຼາຍຄົນດີ້ນລົນ ຍ້ອນຂາດຊັບພະຍາກອນດ້ານການເງິນ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ (ແລະຈໍານວນທີ່ຫຼາຍ) ເກີນຊັບພະຍາກອນ ທີ່ມີ – ມັນຮຽກຮ້ອງໃຫ້ມີການຈັດສັນທຶນ ຢ່າງເໝາະສົມ.

**ສ້າງແຜນງານ ທີ່ບໍ່ເປັນການລະບຸໂຕ ແລະລັງກຽດ.** ຄວາມຊ່ວຍເຫຼືອແກ່ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສາມາດເປັນການສ້າງຄວາມລັງກຽດໜ້ອຍລົງໄດ້ ຖ້າເຊື່ອມສານກັບການບໍລິການທາງສັງຄົມ ອື່ນເພື່ອໃຫ້ມີການຮັບຄວາມຊ່ວຍເຫຼືອບົນພື້ນຖານ ຂອງຜູ້ດ້ອຍໂອກາດຂອງສັງຄົມ ຫຼາຍກວ່າຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ການໃຫ້ໂອກາດ ສໍາລັບການຊ່ວຍເຫຼືອເພື່ອບໍ່ໃຫ້ມີການຕ້ອງອອກຈາກຊຸມຊົນ ແລະຢູ່ໃນສູນຟື້ນຟູ ອາດເປັນທາງເລືອກທີ່ດີ ສໍາລັບຜູ້ຖືກເຄາະຮ້າຍຫຼາຍຄົນ ທີ່ຈະບໍ່ສາມາດປະພໍ່ແມ່ ຫຼື ລູກ ໄດ້ ຫຼື ບໍ່ສາມາດປະຖິ້ມການຫາລາຍໄດ້ ເພື່ອໄປຮັບຄວາມຊ່ວຍເຫຼືອ.

ສໍາລັບຂໍ້ມູນຂ່າວສານເພີ້ມ ກ່ຽວກັບສະຖາບັນປາໂຟ ທີ່ນອກແວ ຫຼື ສະຖາບັນເນຊຸດ ທີ່ ໂອຫຼິດ, ຕິດຕໍ່ຜູ້ຕາງໜ້ານັກຄົ້ນຄວ້າອາວຸໂສ (ນາງ Anette Brunovskis ແລະນາງ Rebecca Surtees) ຕາມທີ່ຢູ່ໃນໜ້າທໍາອິດ. ສໍາລັບຂໍ້ມູນ ກ່ຽວກັບໂຄງການ SIREN ຂອງອົງການ UNIAP ຕິດຕໍ່ ທ່ານ Paul Buckley ທີ່ paul.buckley@undp.org.

SIREN ເປັນຄວາມຄິດລິເລີ່ມ ທີ່ສະໜັບສະໜູນ ໂດຍ:

ອົງການສະຫະປະຊາຊາດ: ໂຄງການຕ້ານການຄ້າມະນຸດ
ຫ້ອງການໃນພາກພື້ນ (UNIAP/PMO)
ອາຄານສະຫະປະຊາຊາດ
ຊັ້ນ 7, ຕຶກ B
ຖະໜົນລາຊດຳເນີນນອກ, ບາງກອກ 10200
ປະເທດໄທ

www.no-trafficking.org